ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກກະສິກໍາ ແລະ ປ່າໄມ້

ເລກທີ 1819 /ກປ.ນວ

ວັນທີ 26 JAN 2022

# ບົດລາຍງານ

ຮຽນ: ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ.

ທີ່ນັບຖືຢ່າງສູງ.

ເລື່ອງ: ຂໍລາຍງານຕ່ອງໂສ້ການລ້ຽງໝູ ທີ່ມີຜົນກະທົບຕໍ່ລາຄາໝູແພງ

- ອີງຕາມ ຂໍ້ຕົກລົງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 3926/ກປ, ລົງວັນທີ 04 ກັນຍາ 2017 ວ່າດ້ວການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກກະສິກໍາ ແລະ ປ່າໄມ້ ປະຈໍາ ນະຄອນຫຼວງວຽງຈັນ;
- ອີງຕາມ ບົດບັນທຶກກອງປະຊຸມການປຶກສາຫາລືກ່ຽວກັບຕ່ອງໂສ້ການລ້ຽງໝູ ທີ່ມີຜົນກະທົບຕໍ່ລາຄາໝູ ແພງ ແລະ ແຜນການລ້ຽງໃນຕໍ່ໜ້າ ຢູ່ນະຄອນຫຼວງວຽງຈັນ ຄັ້ງວັນທີ 12 ມັງກອນ 2022;
- ອີງຕາມ ຜົນສໍາຫຼວດເກັບກໍາຂໍ້ມູນ ຂອງພະແນກກະສິກໍາ ແລະ ປ່າໄມ້ ກ່ຽວກັບການລ້ຽງສັດ ແລະ ການ ປະມົງ ຢູ່ນະຄອນຫຼວງວຽງຈັນໃນປີ 2021;

ພະແນກກະສິກໍາ ແລະ ປ່າໄມ້ ຂໍຖືເປັນກຽດລາຍງານມາຍັງທ່ານຊາບວ່າ: ການລ້ຽງໝູຢູ່ນະຄອນຫຼວງວຽງຈັນ ສາມາດສັງລວມໄດ້ດັ່ງນີ້:

## 1. ສະພາບການລ້ຽງໝູ:

**1.1.** ປີ 2021 ມີໝູທັງໝົດ 140.676 ໂຕ, ໃນນັ້ນ

(1). ການລ້ຽງແບບແບບຄອບຄົວ(ໝູດໍາ) ຈໍານວນ 14.628 ໂຕ ກວມເອົາ 10,4% ຂອງຝູງສັດ

(2). ການລ້ຽງແບບເປັນຟາມ ຈໍານວນ 126.048 ໂຕ ກວມເອົາ 89,6% ຂອງຝູງສັດ.

**1.2. ການລ້ຽງແບບເປັນຟາມ:**

- ມີທັງໝົດ 188 ຟາມ, ຄວາມສາມາດລ້ຽງ 337.810 ໂຕ.
- ລ້ຽງປະຈຸບັນ 155 ຟາມ ລ້ຽງໝູ 126.084 ໂຕ/1 ຮອບວຽນ ເທົ່າກັບ 37,32% ຂອງຄວາມສາມາດລ້ຽງ.
- ຢຸດເຊົາ 33 ຟາມ ຄວາມສາມາດລ້ຽງ 27.670 ໂຕ.
- ອັດຕາການຂະຫຍາຍຝູງຫຼຸດລົງ -30.63% ຕໍ່ປີ (ສົມທຽບ 2019-2021).

ຮູບ1 : ຟາມໝູ ແລະ ຟາມຢຸດເຊົາລ້ຽງ ປີ 2021




| | ຟາມ | ຄວາມສາມາດບັນຈຸ(ໂຕ) |
|---|---|---|
| ຟາມທັງໝົດ | 188 | 337.810 |
| ຟາມເຊົາລ້ຽງ | 33 | 27.670 |

1.3. ສາຍເຫດການຢຸດເຊົາ:

- ຍ້ອນພະຍາດໂຄວິດ-19 ລະບາດ ຕົ້ນປີ 2021 ເຮັດໃຫ້ການນຳເຂົ້າປັດໃຈການຜະລິດເຂົ້າມາບໍ່ໄດ້ ການລ້ຽງກໍ່ຫຼຸດລົງ, ຄວາມຕ້ອງການຕະຫຼາດຫຼຸດລົງ, ແລະ ຍ້ອນການລະບາດພະຍາດອະຫິວາໝູອະຟຣິກາ ຢູ່ນະຄອນຫຼວງວຽງຈັນ ແລະ ປະເທດອ້ອມຂ້າງ.
- ຍ້ອນ ຟາມຈຳນວນໜຶ່ງມີຜົນກະທົບຕໍ່ສິ່ງແວດລ້ອມຕໍ່ຊຸມຊົນ.
- ຍ້ອນ ການສະໜອງລູກໝູນ້ອຍ ບໍ່ພຽງພໍກັບຄວາມຕ້ອງການຜູ້ລ້ຽງໝູຂຶ້ນ.
- ຍ້ອນ ໃນສະພາບທີ່ມີຄວາມສ່ຽງຕໍ່ບັນຫາໂລກລະບາດ ບໍລິສັດສົ່ງເສີມ ສະມາຊິກຟາມທີ່ລ້ຽງໝູໃນລະບົບຄອກປິດ (EVAP) ເຄີຍລ້ຽງໃນຄອກເປີດ ໃຫ້ປ່ຽນເປັນຄອກປິດ (EVAP) ທີ່ໃຊ້ຕົ້ນທຶນສູງການສ້າງຄອກ (ຖ້າບໍ່ເຮັດບໍລິສັດບໍ່ສະໜອງໝູນ້ອຍ ແລະ ອາຫານໃຫ້).

**1.4. ການລ້ຽງໝູແບ່ງອອກເປັນ 05 ກຸ່ມ ມີລາຍລະອຽດດັ່ງນີ້:**

1) ກຸ່ມຄົນລາວ:
   - ມີ 58 ຟາມ ຄວາມສາມາດບັນຈຸຄອກ 54.870 ໂຕ.
   - ລ້ຽງປະຈຸບັນ 43 ຈຳນວນ 17.543 ໂຕ ເທົ່າກັບ 32% ຂອງການລ້ຽງປະຈຸບັນ.
   - ຢຸດເຊົາ 15 ຟາມ ຄວາມສາມາດບັນຈຸ 6.350 ໂຕ.
2) ກຸ່ມຄົນຈີນ:
   - ມີ 19 ຟາມ ຄວາມສາມາດບັນຈຸຄອກ 29.320 ໂຕ.
   - ລ້ຽງປະຈຸບັນ 15 ຈຳນວນ 5.600 ໂຕ ເທົ່າກັບ 19,1% ຂອງການລ້ຽງປະຈຸບັນ.
   - ຢຸດເຊົາ 04 ຟາມ ຄວາມສາມາດບັນຈຸ 8.420 ໂຕ.
3) ກຸ່ມບໍລິສັດຊີພີລາວ:
   - ມີ 98 ຟາມ ຄວາມສາມາດບັນຈຸຄອກ 233.418 ໂຕ.
   - ລ້ຽງປະຈຸບັນ 88 ຟາມ ຈຳນວນ 93.169 ໂຕ ເທົ່າກັບ 39,9% ຂອງການລ້ຽງປະຈຸບັນ.
   - ຢຸດເຊົາ 10 ຟາມ ຄວາມສາມາດບັນຈຸ 8.400 ໂຕ.

4) ກຸ່ມບໍລິສັດ ເບທາໂກລາວ:

- ມີ 11 ຟາມ ຄວາມສາມາດບັນຈຸຄອກ 19.210 ໂຕ.
- ລ້ຽງປະຈຸບັນ 07 ຈຳນວນ 9.236 ໂຕ ເທົ່າກັບ 48,1% ຂອງການລ້ຽງປະຈຸບັນ.
- ຢຸດເຊົາ 04 ຟາມ ຄວາມສາມາດບັນຈຸ 4.500 ໂຕ.

5) ກຸ່ມບໍລິສັດ ຄວາມຫວັງໃໝ່:

- ມີ 2 ຟາມ ຄວາມສາມາດບັນຈຸຄອກ 1.000 ໂຕ.
- ລ້ຽງປະຈຸ ບັນ 02 ຈຳນວນ 500 ໂຕ ເທົ່າກັບ 50% ຂອງການລ້ຽງປະຈຸບັນ.

❖ ຕົ້ນທຶນການລ້ຽງໝູ: ປີ 2021 ຢູ່ໃນລະຫວາງ 24.473-25.365 ກີບ/ກິໂລ.

➢ ຮູບ2: ທຽບເປີເຊັນຈຳນວນທີ່ໝູລ້ຽງ ປີ 2021




ໝາຍເຫດ: ການລ້ຽງໝູຊີ້ນ 2 ຮອບວຽນ/ປີ (ລ້ຽງ 4-5 ເດືອນອອກຂາຍ)

**1.5. ຟາມລ້ຽງໝູພໍ່ແມ່ພັນ**

- ໝູແມ່ພັນ 13.860 ໂຕ ຜະລິດລູກໄດ້ 271.750 ໂຕ/ປີ (ຜະລິດລູກ 2,2 ຄັ້ງ/ປີ, ແມ່ໝູ 1 ໂຕ ເກີດລູກໄດ້10-12ໂຕ)
- ລ້ຽງພາຍໃນ 186.008 ໂຕ ເທົ່າກັບ 68,45 % ທຽບໃສ່ຄວາມຕ້ອງການລ້ຽງຍັງບໍ່ພໍ 66.000 ໂຕ
- ສົ່ງອອກໄປຕ່າງແຂວງ 85.742 ໂຕ ເທົ່າກັບ 31,55 % (ມີຟາມສະມາຊິກ ຊີພີ, ບໍລິສັດ ເບທາໂກ້ ນຳໄປລ້ຽງຢູ່ຕ່າງແຂວງ)

➢ ຮູບ3: ສົມທຽບ ຟາມລ້ຽງໝູແມ່ພັນ



## 2. ຄວາມຕ້ອງການ ແລະ ການສະໜອງຊີ້ນໝູ

❖ ປີ 2021

- ຄວາມຕ້ອງການຊີ້ນໝູ 18.478 ໂຕນ/ປີ = 284.276 ໂຕ/ປີ
- ການສະໜອງຊີ້ນໝູ 15.802 ໂຕນ/ປີ = 243.107 ໂຕ/ປີ
- ດຸ່ນດ່ຽງ - 2.676 ໂຕນ/ປີ = 41.169 ໂຕ/ປີ

ການສະໜອງຍັງບໍ່ພຽງພໍກັບຄວາມຕ້ອງການຂອງຜູ້ບໍລິໂພກ ແລະ ຍັງມີການນຳເຂົ້າ ແລະ ຫຼາຍກວ່າສົ່ງອອກຊີ້ນ 93%

❖ ແຜນປີ 2022

- ຄວາມຕ້ອງການຊີ້ນໝູ 19.088 ໂຕນ/ປີ = 293.661 ໂຕ/ປີ
- ການສະໜອງຊີ້ນໝູ 15.892 ໂຕນ/ປີ = 244.492 ໂຕ/ປີ
- ດຸ່ນດ່ຽງ - 3.919 ໂຕນ/ປີ = 49.169 ໂຕ/ປີ

ແຜນການປະເມີນການສະໜອງຍັງບໍ່ພຽງພໍກັບຄວາມຕ້ອງການຂອງການບໍລິໂພກ ຖ້າທຽບໃສ່ປີ 2021 ຫຼຸດລົງ 19%

❖ **ສົມທຽບລາຄາຂາຍໝູຕົ້ນທຶນໝູເປັນຢູ່ໜ້າຟາມແຕ່ລະຊ່ວງທີ່ລັດກຳນົດຂາຍມີດັ່ງນີ້:**

- ເດືອນ 2/2021 ລາຄາໝູໜ້າຟາມ 27.209 ກີບ/ກິໂລກຼາມ
- ເດືອນ 12/2021 ລາຄາໝູໜ້າຟາມ 24.473 ກີບ/ກິໂລກຼາມ
- ທ້າຍເດືອນ 12/2021 - 1/2022 ລາຄາໝູໜ້າຟາມ 31.000 ກີບ/ກິໂລກຼາມ (ເຈົ້າຂອງຟາມກຳນົດລາຄາເອງ)

ຮູບ4: ສົມທຽບລາຄາໝູແຕ່ລະຊວງ



## 3. ປຽບທຽບການລ້ຽງໝູ 3 ປີ (2019, 2020, 2021)

1. ການລ້ຽງໝູ ປີ 2019
- ມີໝູທັງໝົດ 215.299 ໂຕ
- ລ້ຽງແບບຄອບຄົວ(ໝູດຳ) 16.832 ໂຕ ເທົ່າກັບ 7,8%
- ລ້ຽງແບບເປັນຟາມ ມີ 188 ຟາມ ມີໝູ 198.467ໂຕ ເທົ່າກັບ 92,2 %
- ມີໝູແມ່ພັນ 8.865 ໂຕ. ສາມາດຜະລິດໝູນ້ອຍໄດ້ 198.990 ໂຕ
- ການສະໜອງຊີ້ນໝູ 20.847 ໂຕນ

2. ການລ້ຽງໝູ ປີ 2020
- ມີໝູທັງໝົດ 174.099 ໂຕ
- ລ້ຽງແບບຄອບຄົວ(ໝູດຳ) 16.629 ໂຕ ເທົ່າກັບ 9,5%
- ລ້ຽງແບບເປັນຟາມ ມີ 194 ຟາມມີໝູ 157.470 ໂຕ ເທົ່າກັບ 90,5%
- ແມ່ພັນ 13.023 ໂຕ. ສາມາດຜະລິດໝູນ້ອຍໄດ້ 254.420 ໂຕ
- ການສະໜອງຊີ້ນໝູ 20.638 ໂຕນ

3. ການລ້ຽງໝູ ປີ 2021
- ມີໝູທັງໝົດ 140.676 ໂຕ, ໃນນັ້ນ
- ການລ້ຽງແບບແບບຄອບຄົວ(ໝູດຳ) ຈຳນວນ 14.628 ໂຕ ເທົ່າກັບ 10,4%
- ການລ້ຽງແບບເປັນຟາມມີ 155 ຟາມມີໝູ 126.048 ໂຕ ເທົ່າກັບ 89,6%
- ໝູແມ່ພັນ 13.860 ໂຕ ຜະລິດລູກໄດ້ 271.750 ໂຕ
- ການສະໜອງຊີ້ນໝູ 18.478 ໂຕນ

ຮູບ5: ສົມທຽບຟາມລ້ຽງໝູ (ບໍລວມຟາມຢຸດເຊົາ) ປີ 2019, 2020, 2021



ຮູບ6: ສົມທຽບຈຳນວນໝູ ແລະ ການສະໜອງຊີ້ນໝູ ປີ 2019, 2020, 2021




- ສະຫຼຸບແລ້ວ:
  - ❖ ສະຕິໝູຫຼຸດລົງ

– ທຽບປີ 2021 ໃສ່ປີ 2019 ຫຼຸດລົງ 36%

– ທຽບປີ 2021 ໃສ່ປີ 2020 ຫຼຸດລົງ 20%

❖ ການສະໜອງຊີ້ນໝູ

– ທຽບປີ 2021 ໃສ່ປີ 2019 ຫຼຸດລົງ 11%

– ທຽບປີ 2021 ໃສ່ປີ 2020 ຫຼຸດລົງ 10%

## 4. ເປັນຫຍັງຊີ້ນໝູຈຶ່ງແພງ

❖ ຕົ້ນທຶນການຜະລິດໝູ ຢູ່ໜ້າຟາມ

– ຍ້ອນ ຄວາມຕ້ອງການຢູ່ບັນດາປະເທດເພື່ອນບ້ານ ຍັງບໍ່ພຽງພໍກັບຄວາມຕ້ອງການ ຈຶ່ງມີການຂາຍໝູຊີ້ນໄປຕ່າງປະເທດ.

– ຍ້ອນ ຕົ້ນທຶນການຜະລິດສູງ ເຊັ່ນ: ອາຫານສັດ, ໝູນ້ອຍ, ຄ່າຂົນສົ່ງ, ອັດຕາແລກປ່ຽນເງິນກີບອ່ອນຄ່າ.

– ຍ້ອນ ສະພາບເສດຖະກິດມີການຟື້ນໂຕຫຼັງຈາກການຜ່ອນຜັນມາດຕະການໂຄວິດ-19, ມີການເປີດຮ້ານອາຫານ, ທ່ອງທ່ຽວ, ຈັດງານຕ່າງໆ ກັບຄືນສູ່ປົກກະຕິ ແຕ່ສະພາບການປັບໂຕການຜະລິດບໍ່ທັນກັບຄວາມຕ້ອງການ ເພາະການປັບໂຕການລ້ຽງໃຊ້ເວລາ 4 ເດືອນຢ່າງໜ້ອຍ.

– ຍ້ອນ ຟາມຢຸດເຊົາການລ້ຽງ ເຮັດໃຫ້ກຳລັງການຜະລິດບໍ່ເຕັມຄວາມສາມາດຜະລິດ.

– ມີບໍລິສັດຍ້າຍຖານການຜະລິດໄປຕ່າງແຂວງ ຍ້ອນຄວາມບໍ່ເອກະພາບໃນການຈັດຕັ້ງປະຕິບັດລະບຽບ ເຊັ່ນ: ການເກັບອາກອນ, ຄ່າບໍລິການວິຊາການ, ການຄວບຄຸມລາຄາຂາຍ ໜ້າຟາມ-ຊີ້ນຢູ່ຕະຫຼາດ. ການຂະຫຍາຍຕົວເມືອງ-ທີ່ຢູ່ອາໃສ ທີ່ຍັບເຂົ້າໃກ້ແຫຼ່ງການຜະລິດ ເຮັດໃຫ້ເກີດບັນຫາສິ່ງແວດລ້ອມ.

– ຍ້ອນ ການລ້ຽງໝູພໍ່-ແມ່ພັນ ຜະລິດລູກໝູນ້ອຍ ສະໜອງໃຫ້ຜູ້ລ້ຽງບໍ່ພຽງພໍກັບຄວາມຕ້ອງການ.

– ການລ້ຽງໝູຍັງບໍ່ທັນຈັດຕັ້ງເປັນກຸ່ມ, ສະຫະກອນ ການຜະລິດ ຕັ້ງແຕ່ຂອດລ້ຽງຫາຂອດຈຳໜ່າຍ.

– ການຄຸ້ມຄອງຕະຫຼາດຊີ້ນໝູບໍ່ທັນເປັນລະບົບຄວບຄຸມຍາກ.

5. ວິທີແກ້ໄຂການສະໜອງໝູໃຫ້ພຽງພໍ ແລະ ລາຄາໝູສົມເຫດສົມຜົນ.

- ສ້າງຕັ້ງກຸ່ມ ຫຼື ສະຫະກອນຜູ້ລ້ຽງ ແລະ ສະໜອງຊີ້ນ ເພື່ອສະດວກໃນການຈັດການຈັດຮອບວຽນ, ແບ່ງສັດສ່ວນ ແລະ ເອກະພາບກັນໃນການຜະລິດ, ການສະໜອງ ແລະ ລາຄາການຈຳໜ່າຍ;
- ເພີ່ມການລ້ຽງໝູແມ່ພັນເພີ່ມຂຶ້ນ 3.000 ແມ່ ແລະ ຟື້ນຟູຟາມໝູຊີ້ນທີ່ເຊົາລ້ຽງກັບມາລ້ຽງຄືນ ໂດຍລັດຕ້ອງມີນະໂຍບາຍສະເພາະເຊັ່ນ: ການເຂົ້າຫາແຫຼ່ງທຶນທີ່ເໝາະສົມ, ຍົກເວັ້ນພາສີ, ອາກອນ ປັດໃຈການຜະລິດ, ຫຼຸດຜ່ອນກະແສໄຟຟ້າ ແລະ ຄ່ານ້ຳທີ່ນຳໃຊ້, ປົກປ້ອງການຜະລິດພາຍໃນ.
- ຊຸກຍູ້ໂຮງງານຜະລິດອາຫານສັດທີ່ມີແລ້ວ ເພີ່ມກຳລັງການຜະລິດໃຫ້ເຕັມຄວາມສາມາດ ໂດຍຕິດພັນກັບການສົ່ງເສີມການຜະລິດວັດຖຸດິບອາຫານສັດ.
- ແບ່ງພື້ນທີ່ຕະຫຼາດຈຳໜ່າຍຊີ້ນໝູໃຫ້ເໝາະສົມ ລະຫວ່າງຟາມລ້ຽງໝູທົ່ວໄປ ແລະ ບໍລິສັດສົ່ງເສີມການລ້ຽງໝູ ໂດຍບໍ່ໃຫ້ບໍລິສັດຜູກຂາດຕະຫລາດຜູ້ດຽວ ຢູ່ນະຄອນຫຼວງວຽງຈັນ ປະຕິບັດນະໂຍບາຍສຳພັນເສດຖະກິດກັບບັນດາແຂວງທີ່ມີທ່າແຮງຢ່າງມີແຜນການ ແລະ ຮັດກຸມ.
- ໃຊ້ມາດຕະການທາງກົດໝາຍຕໍ່ຜູ້ທຸ້ມຕະຫຼາດເພື່ອລົ້ມຜູ້ຜະລິດ ແລະ ການສະໜອງໝູຊີ້ນພາຍໃນ.
- ຜູ້ປະກອບການກ່ອນສ້າງຕັ້ງຟາມຕ້ອງປະຕິບັດຕາມມາດຕະຖານທີ່ກຳນົດໄວ້, ຕ້ອງນຳໃຊ້ເຕັກໂນໂລຊີເຂົ້າໃນການລ້ຽງ ຮັບປະກັນດ້ານຄວາມປອດໄພທາງດ້ານຊີວະພາບເປັນຫຼັກ ແລະ ການປ້ອງກັນພະຍາດສັດ.
- ລັດຕ້ອງໄດ້ສ້າງ-ກຳນົດເປັນນິຕິກຳເຂດດິນຟາມ-ບໍລິເວນຟາມແລ້ວປະກາດນຳໃຊ້ເປັນທາງການແບບຖາວອນ.

6. ພາກສະເໜີ

- ສະເໜີໃຫ້ມີການກຳນົດເຂດການຜະລິດກະສິກຳເປັນຕົ້ນແມ່ນບໍລິເວນຟາມລ້ຽງໝູ ເປັນວາລະກອງປະຊຸມອົງການປົກຄອງນະຄອນຫຼວງວຽງຈັນ ເພາະມີຫຼາຍພາກສ່ວນເຊັ່ນ: ຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງຊັບພະຍາກອນ ແລະ ສິ່ງແວດລ້ອມ, ຂະແໜງໂຍທາທິການ ແລະ ຂົນສົ່ງ, ຂະແໜງ ອົງການຄຸ້ມຄອງ ແລະ ພັດທະນາຕົວເມືອງ, ຂັ້ນເມືອງ, ຂັ້ນບ້ານ ແລະ ເຈົ້າຂອງກຳມະສິດທີ່ດິນ.
- ສະເໜີໃຫ້ມີການດັດສົມຕະຫຼາດຜູ້ຂາຍສັດເປັນ ແລະ ຊາກສັດຂາຍຢູ່ຕາມຕະຫຼາດໃຫ້ມີຄົນລາວ ກວມອັດຕາສ່ວນ 2/3 ຂອງຄວາມຕ້ອງການ.
- ໃຫ້ດຳເນີນມາດຕະການທາງກົດໝາຍຕໍ່ຜູ້ປະກອບການທີ່ດຳເນີນນະໂຍບາຍທຸ້ມຕະຫຼາດເພື່ອລົ້ມຜູ້ປະກອບການປະເພດດຽວກັນ.
- ສະເໜີໃຫ້ຂັ້ນເທິງປະຕິບັດນະໂຍບາຍຄຸ້ມຄອງການນຳເຂົ້າໝູຊີ້ນໃຫ້ເຂັ້ມງວດ ຕາມມາດຕະຖານສຸຂານາໄມສັດ ແລະ ມາດຕະຖານຄຸນນະພາບ ແລະ ຄວາມປອດໄພ.

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບ ແລະ ຂໍທິດຊີ້ນຳ

ດ້ວຍຄວາມນັບຖືຢ່າງສູງ.

ຫົວໜ້າ ພະແນກ

ປອ ຫຼ້າສາຍ ນວນທາສິງ